PUBLIC HEALTH DIVISION
Acute and Communicable Disease Prevention

# ສານພິດຫອຍນາງລົມທີ່ເຮັດໃຫ້ເປັນອຳມະພາດ (PSP)

ໃນວັນ Memorial Day ໃນທ້າຍອາທິດ, ອົງການສາທາລະນະສຸກ ລັດໂອເຣກອນ ໄດ້ຮຽນຮູ້ກ່ຽວກັບຄົນຈຳນວນໜຶ່ງທີ່ມີອາການເປັນພິດຂອງຫອຍນາງລົມທີ່ເປັນອຳມະພາດ ຫຼັງຈາກທີ່ໄດ້ກິນຫອຍນາງລົມທີ່ເກັບເອງຈາກແຄມຝັ່ງ ຂອງ ລັດໂອເຣກອນ ທາງພາກເໜືອ.

## ສານພິດ PSP ແມ່ນຫຍັງ??

ສານພິດຫອຍນາງລົມທີ່ເຮັດໃຫ້ເປັນອຳມະພາດ, ຫຼື ສານພິດ PSP, ເກີດຂຶ້ນມາຈາກສານພິດຊະນິດໜຶ່ງທີ່ເອີ້ນວ່າ ສານພິດ saxitoxin. ມັນບໍ່ແມ່ນການຕິດເຊື້ອໃດໜຶ່ງ. ສານພິດ saxitoxins ແມ່ນຜະລິດໂດຍພືດນ້ອຍໆໃນມະຫາສະໝຸດ (phytoplankton) ທີ່ສ້າງຂຶ້ນພາຍໃນຫອຍນາງລົມໂຕມັນເອງ (ເຊັ່ນ clams ແລະ mussels) ແລະ ເປັນພິດຕໍ່ມະນຸດທີ່ກິນພວກມັນ.

## ໃຜເປັນຜູ້ທີ່ຢູ່ໃນຄວາມສ່ຽງ?

ບຸກຄົນໃດກໍ່ຕາມທີ່ກິນຫອຍນາງລົມທີ່ມີສານພິດໂຕນີ້ສາມາດເຈັບປ່ວຍໄດ້ ຫຼື ເຖິງຂັ້ນເສຍຊີວິດກໍ່ເປັນໄດ້ໃນບາງກໍລະນີ. ຖ້າເຈົ້າໄດ້ກິນຫອຍນາງລົມທີ່ອາດຈະມີສານພິດດັ່ງກ່າວນີ້, ເຈົ້າບໍ່ຈຳເປັນຕ້ອງເຮັດຫຍັງເອັ້ນເສຍແຕ່ວ່າກໍລະນີເຈົ້າເຈັບປ່ວຍ (ເບິ່ງຂ້າງລຸ່ມນີ້).

## ຂ້ອຍຄິດວ່າຂ້ອຍມີສານພິດ PSP ດຽວນີ້ ເຮັດຫຍັງຕໍ່?

1. **ຖ້າອາການຂອງເຈົ້າຮຸນແຮງຂຶ້ນ, ໃຫ້ຊອກຫາແພດທັນທີ.**
2. ຖ້າພະຍາດຂອງເຈົ້າບໍ່ຮຸນແຮງ ຫຼື ເຈົ້າຮູ້ສຶກດີຂຶ້ນ, ໃຫ້ລາຍງານພະຍາດຂອງເຈົ້າໄປຫາ ສູນຄົ້ນຫາສານພິດ ຂອງ ລັດໂອເຣກອນ ໂດຍການໂທຫາ 800-222-1222 ຫຼື ຕື່ມຂໍ້ມູນໃສ່ ແບບຟອມສຳຫຼວດທາງອອນໄລ ນີ້ ທີ່ສ້າງຂຶ້ນມາໂດຍ ອົງການສາທາລະນະສຸກ ລັດໂອເຣກອນ.
3. ແຊ່ແຂງ ແລະ ປະຢັດຫອຍນາງລົມທີ່ເຫຼືອໄວ້ເພື່ອສົ່ງໃຫ້ ເຈົ້າໜ້າທີ່ ສາທາລະນະສຸກທ້ອງຖິ່ນ ຂອງເຈົ້າກວດສອບ.

## ຂ້ອຍຈະຮູ້ໄດ້ແນວໃດວ່າຂ້ອຍມີ ສານພິດ PSP?

ພາຍໃນຫຼາຍນາທີ ຫາ ຊົ່ວໂມງ ຫຼັງຈາກທີ່ກິນຫອຍນາງລົມທີ່ປົນເປື້ອນໄປແລ້ວ, ທ່ານອາດຈະເລີ່ມຮູ້ສຶກເຈັບປ່ວຍ. ປົກກະຕິແລ້ວ ການເຈັບປ່ວຍຈະຫາຍໄປຢ່າງສົມບູນພາຍໃນສອງສາມຊົ່ວໂມງຫາມື້ຫຼັງຈາກກິນຫອຍນາງລົມ, ແລະ ປະກອບມີ:

- ປວດຮາກ
- ຮາກ
- ເຈັບທ້ອງ
- ອາການຄັນໃນປາກຂອງທ່ານ
- ເຈັບມື ຫຼື ຕີນຂອງທ່ານ

ຊອກຫາຄວາມຊ່ວຍເຫຼືອທາງການແພດ **ທັນທີ** ຖ້າທ່ານມີອາການໃດໜຶ່ງຂອງບັນດາອາການຂ້າງລຸ່ມນີ້:

- ກ້າມຊີ້ນອ່ອນເພຍ
- ວິນຫົວ ຫຼື ຮູ້ສຶກອຸງງ ຫຼື ໝຸນ
- ເຈັບຫົວເປັນວິນ ຫຼື ຮູ້ສຶກລອຍ
- ຫຍຸ້ງຍາກໃນການປາກເວົ້າ
- ຫຍຸ້ງຍາກໃນການກືນອາຫານ
- ຫຍຸ້ງຍາກໃນການຫາຍໃຈ

ໃນກໍລະນີຮ້າຍແຮງ, ສານ PSP ສາມາດສົ່ງຜົນຕໍ່ລະບົບຫາຍໃຈ ແລະ ເສຍຊີວິດໄດ້ ຖ້າປະໄວ້ໂດຍບໍ່ໄດ້ຮັບການປິ່ນປົວ.

## ຂ້ອຍຈະປ້ອງກັນ ສານພິດ PSP ໄດ້ແນວໃດ?

PSP ບໍ່ສາມາດແຜ່ລະບາດໄດ້ຈາກບຸກຄົນໜຶ່ງສູ່ອີກບຸກຄົນໜຶ່ງ. PSP ເກີດຂຶ້ນຫຼັງຈາກກິນຫອຍນາງລົມທີ່ມີສານພິດ. **ການນໍາມາແຕ່ງເປັນອາຫານ ຫຼື ການແຊ່ເຢັນບໍ່ໄດ້ກະຕຸ້ນໃຫ້ສານພິດຕາຍໄດ້.**

ຫອຍນາງລົມທີ່ບໍລິໂພກຢູ່ຮ້ານອາຫານ ຫຼື ຊື້ຢູ່ໃນຮ້ານຂາຍເຄື່ອງແຫ້ງບໍ່ໄດ້ເຊື່ອມຕໍ່ກັບການລະບາດຂອງ PSP ນີ້ເລີຍ.
ຄວນກິນຫອຍນາງລົມທີ່ນໍາມາຈາກແຫຼ່ງທີ່ປອດໄພ, ບໍ່ວ່າຈະເປັນຜະລິດຕະພັນທາງການຄ້າ ຫຼື ຈາກຫາດຊາຍທີ່ເປີດໃຫ້ເກັບຫອຍໄດ້ນັ້ນກໍຕາມ.
ກົມກະສິກໍາ ຂອງ ລັດໂອເຣກອນ (ODA) ທົດສອບຫອຍນາງລົມຕາມແຄມຝັ່ງ ໂອເຣກອນ ເປັນປະຈໍາ.
ກວດເບິ່ງການປິດເພື່ອຄວາມປອດໄພຈາກຫອຍນາງລົມໃນປັດຈຸບັນຢູ່ທີ່ ເວັບໄຊທ໌ ຂອງ ODA ຫຼື ໂທຫາສາຍດ່ວນການເກັບຫອຍນາງລົມໄດ້ທີ່, 800-448-2474.

## ຂ້ອຍສາມາດຮຽນຮູ້ເພີ່ມເຕີມໄດ້ຢູ່ໃສ?

- ກົມ ຄຸ້ມ ຄອງ ປາ ແລະ ສັດປ່າ, ຫອຍນາງລົມ ແລະ ສານພິດຊີວະພາບ
- ກົມ ສາທາລະນະສຸກ ຂອງ ລັດວໍຊິງຕັນ, ຫອຍນາງລົມ ແລະ ສານພິດຊີວະພາບ
- ສູນຄວບຄຸມ ແລະ ປ້ອງກັນ ພະຍາດ Algal Blooms ທີ່ເປັນອັນຕະລາຍ

ພຶດສະພາ 2024